**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ

ເລກທີ 41 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 15 ມີນາ 2022

# ຂໍ້ຕົກລົງ
## ວ່າດ້ວຍ ການກຳນົດເງື່ອນໄຂເຈລະຈາການອະນຸຍາດລົງທຶນ ປູກຕົ້ນປໍແກ້ວ ນຳໃຊ້ທາງການແພດ ແລະ ເປັນສິນຄ້າ (ໄລຍະທົດລອງ)

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 04/ສພຊ, ລົງວັນທີ 8 ພະຈິກ 2016;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ສະບັບເລກທີ 03/ສພຊ, ລົງວັນທີ 10 ສິງຫາ 2021;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ລະບຽບການ ແລະ ກົນໄກການເຮັດວຽກຂອງລັດຖະບານ ຊຸດທີ IX ສະບັບເລກທີ 41/ນຍ, ລົງວັນທີ 30 ເມສາ 2021;
- ອີງຕາມ ເອກະສານລາຍງານຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 0175/ກຜທ.ລທ3, ລົງວັນທີ 31 ມັງກອນ 2021;
- ອີງຕາມ ການຕົກລົງ ແລະ ທິດຊີ້ນຳຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ໃນວັນທີ 14-15 ກຸມພາ 2022.

**ນາຍົກລັດຖະມົນຕີ ຕົກລົງ:**

ມາດຕາ 1: ເງື່ອນໄຂການຂໍອະນຸຍາດລົງທຶນ ປູກຕົ້ນປໍແກ້ວ ນຳໃຊ້ທາງການແພດ ແລະ ເປັນສິນຄ້າ (ໄລຍະທົດລອງ) ມີດັ່ງນີ້:

1. ເງື່ອນໄຂການສະເໜີຂໍລົງທຶນ.

   1.1 ວິສາຫະກິດ ທີ່ສະເໜີຂໍລົງທຶນ ປູກຕົ້ນປໍແກ້ວ ຕາມຂໍ້ຕົກລົງສະບັບນີ້ ແມ່ນໃຫ້ດຳເນີນທຸລະກິດຕາມຈຸດປະສົງໃນການປູກເພື່ອສະກັດເປັນຢາ ແລະ ການປູກເພື່ອເປັນວັດຖຸດິບຜະລິດເປັນຜະລິດຕະພັນຈາກຕົ້ນປໍແກ້ວ.

   1.2 ເປັນວິສາຫະກິດພາຍໃນ ທີ່ຈົດທະບຽນວິສາຫະກິດ ຢູ່ ສປປ ລາວ;

   1.3 ຜູ້ບໍລິຫານ ແລະ ຜູ້ຖືຮຸ້ນຂອງວິສາຫະກິດດັ່ງກ່າວ ບໍ່ເຄີຍຖືກຄຳຕັດສິນ ຫຼື ຄຳພິພາກສາ ວ່າດ້ວຍການກະທຳຄວາມຜິດ ຕາມກົດໝາຍວ່າດ້ວຍ ຢາເສບຕິດ, ກົດໝາຍວ່າດ້ວຍ ວັດຖຸທີ່ອອກລິດຕໍ່ຈິດປະສາດ ແລະ ກົດໝາຍອື່ນໆຂອງ ສປປ ລາວ ຫຼື ສານຍຸຕິທຳຂອງຕ່າງປະເທດ ມາກ່ອນ ໂດຍມີການຢັ້ງຢືນເອກະສານໃບແຈ້ງໂທດ;

1.4 ໃນກໍລະນີ ມີຜູ້ຮ່ວມລົງທຶນຈາກຕ່າງປະເທດ ໃຫ້ມີການແຈ້ງປະຫວັດການເຄື່ອນໄຫວດ້ານກິດຈະການທຸລະກິດ ໄລຍະ 10 (ສິບ) ປີ ຜ່ານມາ ພ້ອມທັງສຳເນົາໜັງສືຜ່ານແດນ;

1.5 ມີການຢັ້ງຢືນແຫຼ່ງທຶນ ທີ່ຈະນຳໃຊ້ ໃນການລົງທຶນຕໍ່ກິດຈະການດັ່ງກ່າວ ໂດຍມີການຢັ້ງຢືນຈາກທະນາຄານທຸລະກິດໃດໜຶ່ງ ຂອງ ສປປ ລາວ ຫຼື ທະນາຄານ ແຫ່ງ ສປປ ລາວ;

1.6 ມີຂໍ້ມູນດ້ານເຕັກນິກ ແລະ ຜູ້ຊ່ຽວຊານ ໃນການຄຸ້ມຄອງການປູກ ແລະ ການປຸງແຕ່ງ ຕົ້ນປໍແກ້ວ;

1.7 ມີຂໍ້ມູນ ແລະ ການຢັ້ງຢືນດ້ານການຕະຫຼາດ ໃນການຈຳໜ່າຍຜະລິດຕະພັນຈາກປໍແກ້ວ.

ບັນດາເງື່ອນໄຂເອກະສານທີ່ກ່າວມາຂ້າງເທິງ ຕ້ອງມີຫຼັກຖານຢັ້ງຢືນຕົວຈິງ ທາງດ້ານເອກະສານ, ທີ່ຢູ່ບ່ອນຕິດຕໍ່ໄດ້ ເພື່ອເປັນບ່ອນອີງໃນເວລາການກວດກາ ຂອງຂະບວນການພິຈາລະນາອະນຸຍາດ.

2. ການກຳນົດເຂດສຳປະທານ ແລະ ອາຍຸສຳປະທານ.

2.1 ເປັນເຂດທີ່ຍັງເປົ່າຫວ່າງ (ບໍ່ນອນໃນເຂດພື້ນທີ່ ລັດຖະບານໄດ້ອະນຸຍາດໃຫ້ບໍລິສັດອື່ນສຳປະທານແລ້ວ) ໂດຍເຂດພື້ນທີ່ຂໍສຳປະທານ ແມ່ນວິສາຫະກິດເປັນຜູ້ຮັບຜິດຊອບ ຈັດຫາເນື້ອທີ່ປູກເອງແລ້ວນຳສະເໜີຕໍ່ລັດຖະບານ;

2.2 ມີຂໍ້ມູນ ແລະ ການຢັ້ງຢືນພື້ນທີ່ເຂດຂໍສຳປະທານ ທີ່ຈະນຳໃຊ້ເພື່ອປູກປໍແກ້ວ ໂດຍພື້ນທີ່ດັ່ງກ່າວມີການຢັ້ງຢືນຂອງອົງການປົກຄອງທ້ອງຖິ່ນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງປ້ອງກັນປະເທດ ເຫັນດີໃຫ້ນຳໃຊ້ເນື້ອທີ່ດັ່ງກ່າວ;

2.3 ໃນກໍລະນີ ຫາກນຳໃຊ້ທີ່ດິນຂອງບຸກຄົນ ຫຼື ນິຕິບຸກຄົນ ຕ້ອງມີໃບຢັ້ງຢືນສິດນຳໃຊ້ທີ່ດິນ (ໃບຕາດິນ) ແລະ ໃຫ້ວິສາຫະກິດ ເປັນຜູ້ດຳເນີນການຊົດເຊີຍເອງ;

2.4 ເນື້ອທີ່ສຳປະທານ ປູກຕົ້ນປໍແກ້ວ ສູງສຸດບໍ່ເກີນ 100 (ໜຶ່ງຮ້ອຍ) ເຮັກຕາ ຕໍ່ໜຶ່ງວິສາຫະກິດ;

2.5 ອາຍຸສຳປະທານ ໄລຍະທົດລອງ ບໍ່ເກີນ 05 (ຫ້າ) ປີ ແລະ ສາມາດຂໍຕໍ່ອາຍຸໄດ້ ໂດຍລັດຖະບານຈະທົບທວນໃນການຕໍ່ອາຍຸສັນຍາ. ສ່ວນການຈັດຕັ້ງປະຕິບັດ ແມ່ນຈະໄດ້ມີການປະເມີນຄືນໃນປີທີ 3.

3. ດ້ານສິ່ງແວດລ້ອມ.

3.1 ພາຍຫຼັງເຊັນສັນຍາສຳປະທານແລ້ວ ວິສາຫະກິດ ຕ້ອງດຳເນີນການສຶກສາ ແລະ ສ້າງແຜນຄຸ້ມຄອງສິ່ງແວດລ້ອມ, ທຳມະຊາດ ແລະ ສັງຄົມ ຂອງການປູກຕົ້ນປໍແກ້ວ ໃນເນື້ອທີ່ສຳປະທານຂອງຕົນເພື່ອນຳສະເໜີຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮັບຮອງເອົາພາຍໃນ 30 (ສາມສິບ) ວັນ ລັດຖະການ;

3.2 ໃນໄລຍະດຳເນີນທຸລະກິດ ວິສາຫະກິດ ຕ້ອງສົ່ງບົດລາຍງານກ່ຽວກັບສິ່ງແວດລ້ອມ ປະຈຳໄຕມາດ ແລະ ປະຈຳປີ ໃຫ້ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢ່າງເປັນປະຈຳ.

4. ດ້ານສາທາລະນະສຸກ.

**4.1** ການປຸງແຕ່ງ, ສະກັດ, ຖອດຣິດ ແລະ ວິໄຈຄົ້ນຄວ້າວິທະຍາສາດ ເພື່ອນຳໃຊ້ທາງການແພດ ແລະ ເປັນສິນຄ້າ ຕ້ອງນຳສະເໜີໃຫ້ກະຊວງສາທາລະນະສຸກ ເພື່ອພິຈາລະນາຄົ້ນຄວ້າການອອກອະນຸຍາດ ຕາມລະບຽບການ;

4.2 ໃນໄລຍະດຳເນີນທຸລະກິດ, ທຸກການເຄື່ອນໄຫວກິດຈະການ ທີ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ ຕ້ອງໄດ້ຮັບການຕິດຕາມກວດກາ ແລະ ລາຍງານ ໂດຍອີງໃສ່ນິຕິກຳ ທີ່ກະຊວງສາທາລະນະສຸກ ວາງອອກ;

4.3 ທຸກການເຄື່ອນໄຫວ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ສຳລັບຢາປົວພະຍາດ ຕ້ອງລາຍງານໃຫ້ຂະແໜງສາທາລະນະສຸກ ໄດ້ສະຫຼຸບເປັນໄຕມາດ ແລະ ປະຈຳປີ.

5. ພັນທະທາງດ້ານການເງິນ ຕໍ່ລັດຖະບານ.

ວິສາຫະກິດທີ່ລົງທຶນ ປູກ ແລະ ປຸງແຕ່ງຜະລິດຕະພັນຈາກປໍແກ້ວ ຕ້ອງປະຕິບັດພັນທະທາງດ້ານການເງິນ ໂດຍສອດຄ່ອງຕາມກົດໝາຍຂອງ ສປປ ລາວ ດັ່ງນີ້:

5.1 ປະຕິບັດພັນທະດ້ານພາສີ ແລະ ອາກອນ ໃນການນຳເຂົ້າເຄື່ອງມື, ອຸປະກອນ ແລະ ທາດເຄມີ ເພື່ອຮັບໃຊ້ໃນການປູກ ແລະ ປຸງແຕ່ງຜະລິດຕະພັນຈາກປໍແກ້ວ;

5.2 ປະຕິບັດພັນທະດ້ານອາກອນກຳໄລ, ອາກອນມູນຄ່າເພີ່ມ, ອາກອນຊົມໃຊ້, ອາກອນເງິນເດືອນ ແລະ ອາກອນຂົນສົ່ງ ຕາມກົດໝາຍກຳນົດ;

5.3 ວິສາຫະກິດ ຕ້ອງຈ່າຍຄ່າທຳນຽມ (ຄ່າຊື້ສິດສຳປະທານ) ຈຳນວນ 500 (ຫ້າຮ້ອຍ) ໂດລາສະຫະລັດ ຕໍ່ເຮັກຕາ ໃຫ້ແກ່ລັດຖະບານ ໂດຍບໍ່ມີການຫັກລົບໃດໆ ກັບພັນທະຕາມສັນຍາ ຫຼື ກົດໝາຍກ່ຽວຂ້ອງກຳນົດ ພາຍຫຼັງເຊັນສັນຍາ 30 (ສາມສິບ) ວັນ;

5.4 ການຊຳລະສະສາງ ໃຫ້ປະຕິບັດດັ່ງນີ້:

5.4.1 ທຸກການເຄື່ອນໄຫວທາງດ້ານການເງິນ ແລະ ການຊຳລະສະສາງ ໃນການຊື້-ຂາຍຜະລິດຕະພັນ ແມ່ນຕ້ອງຜ່ານລະບົບທະນາຄານ ທີ່ຕັ້ງຢູ່ ສປປ ລາວ ໂດຍຕ້ອງແຈ້ງໃບບິນໃນການຊື້-ຂາຍ ແລະ ເອກະສານທີ່ກ່ຽວຂ້ອງ ໃຫ້ທະນາຄານ, ກໍລະນີວິສາຫະກິດໃດບໍ່ຜ່ານລະບົບທະນາຄານ ຈະບໍ່ອະນຸຍາດໃຫ້ລົງບັນຊີລາຍຈ່າຍຂອງວິສາຫະກິດນັ້ນ;

5.4.2 ພາຍຫຼັງໄດ້ຮັບສິດສຳປະທານຈາກລັດຖະບານ, ວິສາຫະກິດ ຕ້ອງເປີດບັນຊີສະເພາະຂອງໂຄງການນຳທະນາຄານທຸລະກິດໃດໜຶ່ງ ຢູ່ ສປປ ລາວ ເປັນສະກຸນເງິນກີບ ຫຼື ເງິນຕາຕ່າງປະເທດ ເພື່ອຮັບຮອງທຸລະກຳທາງການເງິນຂອງໂຄງການ ໂດຍສະເພາະເງິນລົງທຶນ, ເງິນກູ້, ລາຍຮັບຈາກການຂາຍຜະລິດຕະພັນປໍແກ້ວ, ການປະຕິບັດພັນທະຕໍ່ລັດຖະບານ ແລະ ອື່ນໆ ໂດຍໃຫ້ທະນາຄານ ແຫ່ງ ສປປ ລາວ ຕິດຕາມການເຄື່ອນໄຫວຂອງບັນຊີດັ່ງກ່າວ ນຳທະນາຄານທຸລະກິດ;

5.4.3 ວິສາຫະກິດ ຕ້ອງໂອນລາຍຮັບຈາກການຂາຍຜະລິດຕະພັນປໍແກ້ວ ເຂົ້າມາບັນຊີສະເພາະຂອງຕົນ ພາຍໃນກຳນົດເວລາ 30 (ສາມສິບ) ວັນ ນັບຈາກວັນທີໄດ້ຮັບຊຳລະ ແລະ ຮັກສາໄວ້ບັນຊີສະເພາະນັ້ນ ແລະ ຂາຍເງິນຕາຕ່າງປະເທດ ໃຫ້ທະນາຄານທຸລະກິດທີ່ຕົນໄດ້ເປີດບັນຊີສະເພາະຢູ່ ຢ່າງໜ້ອຍ 30% (ສາມສິບສ່ວນຮ້ອຍ) ຂອງລາຍຮັບດັ່ງກ່າວ;

5.4.4 ວິສາຫະກິດ ສາມາດຊື້ເງິນຕາຕ່າງປະເທດ ນຳທະນາຄານທຸລະກິດ ທີ່ເປີດບັນຊີສະເພາະບົນພື້ນຖານ ການປະກອບສ່ວນຂາຍເງິນຕາຕ່າງປະເທດ ຂອງວິສາຫະກິດ ໃຫ້ທະນາຄານທຸລະກິດໃນໄລຍະຜ່ານມາ ເພື່ອຈຸດປະສົງໃນການຊຳລະສະສາງກັບຕ່າງປະເທດ ທີ່ສອດຄ່ອງຕາມກົດໝາຍວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ລະບຽບການກ່ຽວຂ້ອງ;

5.4.5 ວິສາຫະກິດ ຕ້ອງລາຍງານຂໍ້ມູນການເງິນຂອງຕົນ ໃຫ້ທະນາຄານ ແຫ່ງ ສປປ ລາວ (ກົມນະໂຍບາຍເງິນຕາ) ດັ່ງນີ້:

- ເລກບັນຊີສະເພາະຂອງໂຄງການ ພາຍໃນກຳນົດເວລາ 02 (ສອງ) ວັນ ນັບຈາກວັນທີ່ໄດ້ຮັບການເປີດບັນຊີ ຢູ່ທະນາຄານທຸລະກິດ;
- ນຳສົ່ງສຳເນົາ ສັນຍາການຊື້-ຂາຍຜະລິດຕະພັນປໍແກ້ວ ກັບບັນດາຄູ່ຄ້າ.

6. ເງື່ອນໄຂກົດໝາຍຄຸ້ມຄອງ ແລະ ການແກ້ໄຂຂໍ້ຂັດແຍ່ງ.

6.1 ການແກ້ໄຂຂໍ້ຂັດແຍ່ງ: ປະຕິບັດຕາມຂະບວນຍຸຕິທຳ ຢູ່ ສປປ ລາວ;

6.2 ກົດໝາຍ: ນຳໃຊ້ກົດໝາຍຂອງ ສປປ ລາວ;

6.3. ພາສາ: ພາສາລາວ ເປັນຫຼັກ.

ມາດຕາ 2. ຂະບວນການອະນຸຍາດການລົງທຶນ.

2.1 ລັດຖະບານ ຕົກລົງກຳນົດເອົາ 10 (ສິບ) ວິສາຫະກິດ ເພື່ອດຳເນີນການລົງທຶນ ປູກ ແລະ ປຸງແຕ່ງຜະລິດຕະພັນຈາກປໍແກ້ວ ເປັນການເຮັດທົດລອງ; ຫຼັງຈາກນັ້ນໄລຍະໜຶ່ງຈຶ່ງຖອດຖອນບົດຮຽນ ແລ້ວຈຶ່ງພິຈາລະນາຕື່ມ ຕາມຄວາມເໝາະສົມ.

2.2 ໃນກໍລະນີ ເຂດສຳປະທານທີ່ສະເໜີຂໍລົງທຶນ ຫາກມີການທັບຊ້ອນກັນ ໃຫ້ຖືເອົາຄຳເຫັນຂອງທ້ອງຖິ່ນ ຫຼື ຂະແໜງການ ທີ່ອອກຄຳເຫັນໃຫ້ວິສາຫະກິດໃດໜຶ່ງນັ້ນກ່ອນ ແລະ ຖືເປັນບູລິມະສິດໃນການມອບພື້ນທີ່ໃຫ້ວິສາຫະກິດດັ່ງກ່າວ ສຳປະທານທີ່ດິນ;

2.3 ວິສາຫະກິດ ທີ່ມີເງື່ອນໄຂຄົບຖ້ວນ ຕາມຂໍ້ຕົກລົງສະບັບນີ້ ແລະ ຜ່ານການກວດກາຢັ້ງຢືນຈາກຄະນະຮັບຜິດຊອບຄົ້ນຄວ້າ ຈຶ່ງລາຍງານຕໍ່ລັດຖະບານ ແລະ ເມື່ອມີການຕົກລົງເຫັນດີ ໃຫ້ເຊີນມາເຈລະຈາສັນຍາສຳປະທານ ແລ້ວລາຍງານຜົນການເຈລະຈາ ຕາມທີ່ວິສາຫະກິດຮັບເງື່ອນໄຂໄດ້ ຕາມຂໍ້ຕົກລົງສະບັບນີ້ ໃຫ້ລັດຖະບານ ເພື່ອຂໍອະນຸມັດເຊັນສັນຍາສຳປະທານ;

2.4 ໃນກໍລະນີ ວິສາຫະກິດທີ່ຖືກຄັດເລືອກ ໄດ້ເຊັນສັນຍາສຳປະທານກັບລັດຖະບານແລ້ວ ຫາກບໍ່ສາມາດປະຕິບັດຕາມເງື່ອນໄຂ ທີ່ລະບຸໃນຂໍ້ຕົກລົງສະບັບນີ້ ພາຍໃນ 30 ວັນ ຫຼັງຈາກເຊັນສັນຍາສຳປະທານ ຈະຖືວ່າເປັນໂມຄະ ແລະ ກະຊວງແຜນການ ແລະ ການລົງທຶນ ຈະເປັນເຈົ້າການສົມທົບກັບພາກສ່ວນກ່ຽວຂ້ອງ ພິຈາລະນາຄັດເລືອກເອົາໃຫ້ວິສາຫະກິດອື່ນ ທີ່ຢູ່ໃນລຳດັບຮອງລົງມາ ປ່ຽນແທນຕາມລຳດັບ.

ມາດຕາ 3. ການຄຸ້ມຄອງ.

3.1 ວິສາຫະກິດ ຕ້ອງປະຕິບັດຂັ້ນຕອນ ແລະ ຕາມນິຕິກຳ ທີ່ກະຊວງກ່ຽວຂ້ອງ ວາງອອກຢ່າງເຂັ້ມງວດ ໃນການຄຸ້ມຄອງການປູກ ແລະ ປຸງແຕ່ງຜະລິດຕະພັນ ແລະ ສິ່ງເສດເຫຼືອຈາກຕົ້ນປໍແກ້ວ;

3.2 ວິສາຫະກິດ ຕ້ອງສ້າງແຜນການດຳເນີນງານຂອງຕົນ ຕາມແຕ່ລະຂັ້ນຕອນ ນັບແຕ່ຂັ້ນຕອນການປູກ, ຜະລິດປຸງແຕ່ງ, ສະກັດ, ຖອດຣິດ ແລະ ວິໄຈຄົ້ນຄວ້າວິທະຍາສາດ ຕົ້ນປໍແກ້ວ ເພື່ອສະເໜີຂໍການຮັບຮອງຈາກກະຊວງສາທາລະນະສຸກ;

3.3 ວິສາຫະກິດ ຕ້ອງໄດ້ລາຍງານຜົນໄດ້ຮັບຂອງການປູກ ແລະ ປຸງແຕ່ງ ຕົ້ນປໍແກ້ວ ປະຈຳໄຕມາດ ແລະ ປະຈຳປີ ທັງຕ້ອງໄດ້ຮັບການຕິດຕາມ, ກວດກາ ຈາກຂະແໜງການກ່ຽວຂ້ອງ ຢ່າງເປັນປົກກະຕິ ເພື່ອຮັບປະກັນການຜະລິດປຸງແຕ່ງ ໄປຕາມແຜນທີ່ໄດ້ອະນຸຍາດ;

3.4 ອົງການປົກຄອງທ້ອງຖິ່ນ ບ່ອນທີ່ໂຄງການຕັ້ງຢູ່ ພາຍຫຼັງໄດ້ຮັບນິຕິກຳຈາກຂະແໜງການສູນກາງແລ້ວ ຕ້ອງເປັນເຈົ້າການ ຊີ້ນຳຂະແໜງການກ່ຽວຂ້ອງຂອງທ້ອງຖິ່ນຕົນ ໃນການປະກອບພະນັກງານວິຊາການ

ເພື່ອບໍລິການຮັບໃຊ້ ການດຳເນີນກິດຈະການຂອງວິສາຫະກິດ ຕາມພາລະບົດບາດຂອງແຕ່ລະພາກສ່ວນ ເປັນຕົ້ນ ການຢັ້ງຢືນດ້ານເນື້ອທີ່, ດ້ານສິ່ງແວດລ້ອມ ແລະ ບັນຫາອື່ນໆ ທີ່ຕິດພັນກັບໂຄງການ;

3.5 ລະບຽບການຄຸ້ມຄອງທາງດ້ານເຕັກນິກ ການປູກ, ສະກັດ, ຖອດຣິດ ແລະ ປຸງແຕ່ງ ແມ່ນໃຫ້ກະຊວງ ສາທາລະນະສຸກ ເປັນຜູ້ອອກນິຕິກຳລະອຽດສະເພາະ.

ມາດຕາ 4. ຂໍ້ຫ້າມ.

ວິສາຫະກິດ ທີ່ໄດ້ຮັບການອະນຸຍາດລົງທຶນ ຫ້າມກະທຳ ດັ່ງນີ້:

4.1 ຫ້າມຊື້-ຂາຍ ຫຼື ໂອນໂຄງການ ແລະ ຫ້າມແບ່ງເຂດສຳປະທານໃຫ້ຜູ້ອື່ນ ປູກ ແລະ ປຸງແຕ່ງຜະລິດຕະພັນ ຈາກຕົ້ນປໍແກ້ວ, ຖ້າບໍ່ໄດ້ຮັບການເຫັນດີອະນຸມັດຈາກລັດຖະບານ;

4.2 ຫ້າມມີການກະທຳ ທີ່ເປັນການລະເມີດສັນຍາສຳປະທານ, ໃນກໍລະນີຜູ້ລົງທຶນມີການລະເມີດຂໍ້ກຳນົດໃດ ໜຶ່ງຂອງສັນຍາ ລັດຖະບານຈະແຈ້ງເຕືອນ ສູງສຸດ 02 (ສອງ) ຄັ້ງ ເພື່ອໃຫ້ດຳເນີນການແກ້ໄຂ ພາຍໃນ ກຳນົດເວລາ 05 (ຫ້າ) ວັນລັດຖະການ, ຖ້າບໍ່ສາມາດແກ້ໄຂໄດ້ ລັດຖະບານ ຈະຖອນສິດສຳປະທານ ໂຄງການຄືນ ໂດຍບໍ່ມີເງື່ອນໄຂ.

ມາດຕາ 5. ການຈັດຕັ້ງປະຕິບັດ.

5.1 ມອບໃຫ້ ກະຊວງແຜນການ ແລະ ການລົງທຶນ ເປັນໃຈກາງສົມທົບກັບກະຊວງ ແລະ ອົງການປົກຄອງ ທ້ອງຖິ່ນທີ່ກ່ຽວຂ້ອງ ເຈລະຈາສັນຍາກັບຜູ້ລົງທຶນ ຕາມເງື່ອນໄຂທີ່ໄດ້ກຳນົດໃນຂໍ້ຕົກລົງສະບັບນີ້;

5.2 ມອບໃຫ້ ບັນດາຂະແໜງການສາຍຕັ້ງ ແລະ ອົງການປົກຄອງທ້ອງຖິ່ນ ບ່ອນໂຄງການຕັ້ງຢູ່ຮັບຜິດຊອບ ຕິດຕາມ, ກວດກາ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດໂຄງການຕົວຈິງຂອງຜູ້ລົງທຶນ ຕາມທີ່ກຳນົດໄວ້ໃນ ສັນຍາ, ກົດໝາຍ ແລະ ລະບຽບການກ່ຽວຂ້ອງ ຢ່າງເຂັ້ມງວດ;

5.3 ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ລວມທັງບັນດາບໍລິສັດ ທີ່ມີຄວາມສົນໃຈລົງທຶນ ປູກ ແລະ ປຸງແຕ່ງຜະລິດຕະພັນຈາກ ປໍແກ້ວ ແບບທົດລອງ ຢູ່ ສປປ ລາວ ຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງຖືກຕ້ອງ ແລະ ເຂັ້ມງວດ.

ມາດຕາ 6. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ພັນຄຳ ວິພາວັນ

ບ່ອນນຳສົ່ງ:

| | |
|---|---|
| - ນາຍົກ-ຮອງນາຍົກລັດຖະມົນຕີ | 4 ສະບັບ; |
| - ຫ້ອງວ່າການສູນກາງພັກ | 1 ສະບັບ; |
| - ຫ້ອງວ່າການສຳນັກງານປະທານປະເທດ | 1 ສະບັບ; |
| - ຂະແໜງການຕ່າງໆຂັ້ນສູນກາງ, ບ່ອນລະ | 1 ສະບັບ; |
| - ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ, ບ່ອນລະ | 1 ສະບັບ; |
| - ຄະນະນຳ ຫສນຍ, ທ່ານລະ | 1 ສະບັບ; |
| - ສຳເນົາ | 1 ສະບັບ. |